# ລັດຖະບານລາວໃຫ້ຄວາມສຳຄັນ ຕໍ່ວັນສາກົນຊົນເຜົ່າພື້ນເມືອງໂລກ

*(ຂປລ): ສູນກາງແນວລາວສ້າງຊາດຮ່ວມກັບກະຊວງການຕ່າງປະເທດ ແລະ ອົງການສປຊ.ເພື່ອການພັດທະນາ ປະຈຳລາວ ໄດ້ ຈັດການລະດົມຄວາມຄິດເຫັນດ້ວຍການສຳມະນາກ່ຽວກັບຊົນເຜົ່າໃນລາວເມື່ອວັນທີ 15 ສິງຫາ 2008 ທີ່ນະຄອນຫລວງວຽງຈັນເນື່ອງໃນໂອກາດວັນສາກົນ ຊົນເຜົ່າພື້ນເມືອງໂລກ ວັນທີ 9 ສິງຫາ 1994 ໂດຍມີຜູ້ຕາງໜ້າຈາກບັນດາກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ ແລະ ອົງການຈັດຕັ້ງຕ່າງໆຂອງ ລາວ, ມີຜູ້ຕາງໜ້າຈາກອົງການ ສປຊ ເພື່ອການພັດທະນາປະຈຳລາວ ແລະ ອົງການຈັດຕັ້ງສາກົນຕ່າງໆເຂົ້າຮ່ວມ.

ທ່ານ ສຈ ດຣ ໄຊຍະມັງ ວົງສັກ, ຮອງປະທານສູນກາງແນວລາວສ້າງຊາດໄດ້ກ່າວວ່າ: ໃນປີ 1994 ອົງການ ສປຊ ໄດ້ຕົກລົງຮັບຮອງເອົາວັນທີ 09 ສິງຫາ ເປັນວັນສາກົນຊົນເຜົ່າພື້ນເມືອງ ແລະນັບແຕ່ນັ້ນມາອົງການສະຫະປະຊາດ ແລະ ບັນດາປະເທດສະມາຊິກໄດ້ຈັດຕັ້ງສະເຫຼີມສະຫລອງວັນສາກົນດັ່ງກ່າວໃນຮູບແບບຕ່າງໆ. ສປປລາວ ກໍໄດ້ເອົາໃຈໃສ່ໃຫ້ການຮ່ວມມືກັບສາກົນໃນບັນຫາທີ່ພົວພັນກັບຊົນເຜົ່າພື້ນເມືອງໂລກ. ໃນເດືອນກັນຍາ 2007 ລັດຖະບານລາວໄດ້ລົງຄະແນນສຽງສະໜັບສະໜູນຕໍ່ຖະແຫຼງການຂອງອົງການສະຫະປະຊາຊາດວ່າດ້ວຍສິດທິຂອງຊົນເຜົ່າພື້ນເມືອງ, ຊຶ່ງໄດ້ຖືກຮັບຮອງເອົາໂດຍສະມັດຊາໃຫຍ່ ສປຊ ທີ່ມີ 143 ປະເທດເຫັນດີ. ນອກຈາກນີ້, ສປປ ລາວ ຍັງໄດ້ໃຫ້ການຮ່ວມມືກັບໜ່ວຍງານ ແລະ ກົນໄກທີ່ກ່ຽວຂ້ອງ, ຂະນະທີ່ໃນລະດັບປະເທດ, ລັດຖະບານລາວໄດ້ມອບໃຫ້ສູນກາງແນວລາວສ້າງຊາດໂດຍປະສານກັບກະຊວງແລະອົງການທີ່ກ່ຽວຂ້ອງຕ່າງໆເປັນໃຈກາງ ປະສານງານໃນບັນຫາທີ່ພົວພັນກັບຊົນເຜົ່າພື້ນເມືອງໃນໂລກ. ☛ ອ່ານຕໍ່ໜ້າ 2

ສູນກາງແນວລາວສ້າງຊາດເປັນອົງການຈັດຕັ້ງການເມືອງທີ່ມີພາລະບົດບາດ ແລະ ໜ້າທີ່ເຕົ້າໂຮມຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ, ທຸກຊັ້ນຄົນ. ທຸກສາດສະໜາ, ນັກຮຽນຮູ້ປັນຍາຊົນ, ເພື່ອປຸກລະດົມການປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດ, ສ່ວນບັນດາກະຊວງຂະແໜງການ ແລະ ອົງການຕ່າງໆຂັ້ນສູນກາງ ແລະ ທ້ອງຖິ່ນກໍລ້ວນແຕ່ມີສ່ວນຮ່ວມໃນການສົ່ງເສີມຄວາມສາມັກຄີ, ຄວາມສະເໝີພາບລະຫວ່າງປະຊາຊົນບັນດາເຜົ່າ ໃນການເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດຂອງພວກເຂົາ

ສປປລາວ ເປັນປະເທດທີ່ປະກອບດ້ວຍຫລາຍຊົນເຜົ່າທີ່ມີຈຸດພິເສດສະເພາະຂອງຕົນ ແລະ ແຕກຕ່າງກັບຫລາຍປະເທດໃນໂລກ ບັນດາເຜົ່າໃນສປປ ລາວ ດຳລົງຊີວິດຢູ່ສະຫຼັບຊັບຫວ່າງກັນແຕ່ເໜືອຮອດໃຕ້, ບໍ່ມີຊົນເຜົ່າໃດໜຶ່ງດຳລົງຊີວິດຢູ່ຕ່າງຫາກເປັນບໍລິເວນໃດໜຶ່ງທີ່ກ້ວາງໃຫຍ່ໄພສານຕັ້ງແຕ່ໃດໆມາ ເຂົາເຈົ້າຢູ່ຮ່ວມກັນໂດຍສັນຕິ, ສາມັກຄີຮັກແພງ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຊົນເຜົ່າໃດກໍລ້ວນມີຈຸດພິເສດລວມແຫ່ງວົງຄະນາຍາດແຫ່ງຊາດລາວ.

ກອງປະຊຸມສຳມະນາຄັ້ງນີ້ແມ່ນເປັນໂອກາດໃຫ້ແກ່ຜູ້ເຂົ້າຮ່ວມໄດ້ສຶກສາຄົ້ນຄ້ວາກ່ຽວກັບຊົນເຜົ່າພື້ນເມືອງໃນໂລກ ແລະ ຊົນເຜົ່າໃນ ສປປ ລາວ ເຊິ່ງຈະເປັນການເສີມຂະຫຍາຍຄວາມຮັບຮູ້ ແລະ ຄວາມເຂົ້າໃຈອັນຖືກຕ້ອງຂອງພວກເຮົາກ່ຽວກັບບັນຫາດັ່ງກ່າວ, ທັງເປັນການສະແດງເຖິງຄວາມເອົາໃຈໃສ່ໃຫ້ຄວາມສຳຄັນຂອງ ສປປ ລາວ ຕໍ່ວັນສາກົນຊົນເຜົ່າພື້ນເມືອງໃນໂລກ, ໃຫ້ການຮ່ວມມືກັບວົງຄະນາຍາດສາກົນຕໍ່ກັບບັນຫາເຊິ່ງພົວພັນກັບຊົນເຜົ່າພື້ນເມືອງໂລກໂດຍສະເພາະແລ້ວເພື່ອປະກອບສ່ວນເຂົ້າໃນທິດສະ ຫວັດວ່າດ້ວຍຊົນເຜົ່າພື້ນເມືອງຂອງອົງການສະຫະປະຊາຊາດ./.ຂ່າວວັນ

( ປະເທດລາວ, ວັນທີ 19 ສິງຫາ 2008 )